**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

---

**ກະຊວງການເງິນ**

**ກົມສ່ວຍສາອາກອນ**

**ເຖິງ :** ບັນດາທ່ານ ພະນັກງານ, ທະຫານ, ຕໍາຫລວດ, ພໍ່ແມ່ພີ່ນ້ອງປະຊາຊົນ, ບຸກຄົນ, ນິຕິ ບຸກຄົນ, ອົງການ ຈັດຕັ້ງຂອງລັດ ແລະ ເອກະຊົນ ທີ່ດໍາເນີນທຸລະກິດ ແລະ ມີກໍາມະສິດຍານພາຫະນະ.

**ເລື່ອງ :** ການລົງທະບຽນ ຍານພາຫະນະ .

ກົມສ່ວຍສາອາກອນ, ກະຊວງການເງິນ ຂໍແຈ້ງໃຫ້ທ່ານຊາບວ່າ ໃນປະຈຸບັນ ກົມສ່ວຍສາອາກອນ ໄດ້ພັດທະນາລະບົບການຄຸ້ມຄອງເກັບອາກອນຍານພາຫະນະ ໂດຍນໍາໃຊ້ເຄື່ອງມືທີ່ທັນສະໄໝ ຊຶ່ງຈະເລີ່ມຈັດຕັ້ງປະຕິບັດໃນໄວໆນີ້. ພາຍຫລັງທີ່ລັດຖະບານໄດ້ປະກາດໃຊ້ອາກອນຍານພາຫະນະຢ່າງເປັນທາງການແລ້ວ ບັນດາທ່ານຈະມີພັນທະໃຫ້ແກ່ລັດ ຕໍ່ກັບການນໍາໃຊ້ຍານພາຫະນະ (ລົດຈັກ, ລົດໃຫຍ່) ຕາມລະບຽບກົດໝາຍວາງອອກ. ການຄຸ້ມຄອງເກັບອາກອນຈາກຍານພາຫະນະ ຈະນໍາເອົາລະບົບເອເລັກໂຕຣນິກ ເຂົ້າມາຄຸ້ມຄອງຊ່ວຍ ເພື່ອອໍານວຍຄວາມສະດວກໃຫ້ແກ່ປະຊາຊົນທຸກຊັ້ນຄົນ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງຕ່າງໆ ສາມາດເຂົ້າເຖິງການບໍລິການ ໃນການເກັບອາກອນຍານພາຫະນະ ໃຫ້ມີຄວາມໂປ່ງໃສ, ຖືກຕ້ອງ, ຄົບຖ້ວນ, ວ່ອງໄວ ແລະ ສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ເສຍອາກອນ.

ສະນັ້ນ, ກົມສ່ວຍສາອາກອນ ຈຶ່ງຂໍເຊີນຊວນບັນດາທ່ານ ພະນັກງານ, ທະຫານ, ຕໍາຫລວດ, ພໍ່ແມ່ພີ່ນ້ອງ ປະຊາຊົນ, ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຂອງລັດ ແລະ ເອກະຊົນ ທີ່ດໍາເນີນທຸລະກິດ ໃຫ້ໄປລົງທະບຽນຍານພາຫະນະ ທີ່ຕົນເປັນເຈົ້າຂອງ ຫລື ມີກໍາມະສິດຍານພາຫະນະທຸກປະເພດ ທັງລົດຈັດ, ລົດໃຫຍ່ ນໍາກົມສ່ວຍສາອາກອນ ຄືດັ່ງນີ້ :

1. ເປົ້າໝາຍ ຍານພາຫະນະທີ່ລົງທະບຽນມີຄື : ລົດຈັກ ແລະ ລົດໃຫຍ່ ທຸກປະເພດ, ທຸກຍີ່ຫໍ້ ທີ່ທ່ານມີກໍາມະສິດ ຊຶ່ງໄດ້ຂຶ້ນທະບຽນປ້າຍລົດ ເອກະຊົນລາວ, ຊົ່ວຄາວ, ທຸລະກິດ, ກອງທັບ, ປກສ, ບຸກຄົນຕ່າງປະເທດ, ສປຊ, ສະຖານທູດ, ສງ...
2. ວັນ ແລະ ເວລາ ລົງທະບຽນ: - ສາມາດລົງທະບຽນໄດ້ ແຕ່ວັນທີ 20 ມັງກອນ 2014 ເປັນຕົ້ນໄປ.
   - ເວລາ 08 ໂມງ 30 ເຖິງ 16 ໂມງ 00 ຂອງທຸກວັນລັດຖະການ.
3. ເອກະສານເພື່ອລົງທະບຽນ : - ສໍາເນົາ ພ້ອມດ້ວຍ ເອກະສານຕົວຈິງ ໃບທະບຽນຍານພາຫະນະຕົວຈິງ (ລົດຈັກ,ລົດໃຫຍ່) ແລະສໍາເນົາ ພ້ອມດ້ວຍເອກະສານຈິງຈິງ ບັດປະຈໍາຕົວ ຫລື ສໍາມະໂນຄົວ, Passport (ສໍາ ລັບຄົນຕ່າງປະເທດ) ຂອງຜູ້ທີ່ເປັນເຈົ້າຂອງຍານພາຫະນະ ທີ່ລົງທະບຽນ.
   - ສໍາລັບຍານພາຫະນະ (ລົດຈັກ,ລົດໃຫຍ່) ທີ່ອົງການຈັດຕັ້ງຂອງລັດ ເປັນກໍາມະສິດ ແມ່ນໃຫ້ສໍາເນົາ ແລະ ເອກະສານທະບຽນຍານພາຫະນະຕົວຈິງ.
4. ສະຖານທີ່ລົງທະບຽນ : ສູນບໍລິການຜູ້ເສຍອາກອນ ຊັ້ນ 1 ຕຶກອາຄານຂອງ ບໍລິສັດ CSCC, ຕາມແຜນທີ່ ໄດ້ຂັດຕິດມາພ້ອມນີ້.

<u>ໝາຍເຫດ</u>: - ສະຖານທີ່ລົງທະບຽນ ສໍາລັບຢູ່ນະຄອນຫລວງວຽງຈັນ ປະຈຸບັນໄດ້ເປີດບໍລິການ ຢູ່ສູນບໍລິການຜູ້ເສຍອາກອນ ຕາມທີ່ຢູ່ໄດ້ລະບຸຢູ່ຂ້າງເທິງນັ້ນ, ສ່ວນຢູ່ບັນດາແຂວງ ຈະໄດ້ແຈ້ງໃຫ້ທ່ານຊາບຕາມພາຍຫລັງ.

- ສໍາລັບ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ, ວິສາຫະກິດ ທີ່ນໍາເຂົ້າ ຫລື ດໍາເນີນທຸລະກິດ ດ້ານຍານພາຫະນະ ກໍ່ໃຫ້ ມາລົງທະບຽນເພື່ອເຂົ້າຢູ່ໃນລະບົບຄຸ້ມຄອງເກັບອາກອນຍານພາຫະນະ ແບບເອເລັກໂຕຣນິກ ຊຶ່ງກົມສ່ວຍສາອາກອນ ຈະອອກເລກລະຫັດການນໍາໃຊ້ ເພື່ອໃຊ້ໃນການແຈ້ງຂໍ້ມູນການນໍາເຂົ້າຍານພາຫະນະ ແລະ ຄິດໄລ່ເສຍແຈ້ງອາກອນດ້ວຍຕົນເອງ ພາຍຫລັງທີ່ລັດຖະບານໄດ້ປະກາດໃຊ້ອາກອນຍານພາຫະນະ ຢ່າງເປັນທາງການແລ້ວ. ເວລາ ແລະ ສະຖານທີ່ ແມ່ນຕາມຂໍ້ມູນທີ່ແຈ້ງຢູ່ຂ້າງເທິງນັ້ນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ້ານເພື່ອຊາບ ແລະ ຫວັງວ່າ ຄົງຈະໄດ້ຮັບຄວາມຮ່ວມມືເປັນຢ່າງດີ.

ໂຄງການພັດທະນາການຄຸ້ມຄອງເກັບອາກອນ
ດ້ວຍລະບົບເອເລັກໂຕຣນິກ

ຕິດຕໍ່ສອບຖາມ : 021-451845

# ແຜນທີ່ສູນບໍລິການຜູ້ເສຍອາກອນຍານພາຫະນະ, ກະຊວງການເງິນ (ບໍລິສັດ ຊີເອັສຊີຊີ)




ຕິດຕໍ່: ພານຸທິດ 020 28131444

ອານຸສອນ 020 22778818